**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

2233

ກະຊວງສາທາລະນະສຸກ ເລກທີ................/ສທ

ນະຄອນຫຼວງວຽງຈັນ, ວັນທີ 03 AUG 2022

# ຂໍ້ຕົກລົງ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ
# ສະພາຄຸ້ມຄອງວິຊາຊີບປິ່ນປົວ

- ອີງຕາມ ກົດໝາຍວ່າດ້ວຍການປິ່ນປົວ (ສະບັບປັບປຸງ) ເລກທີ 58/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສາທາລະນະສຸກ ເລກທີ 570/ນຍ, ລົງວັນທີ 16 ກັນຍາ 2021;
- ອີງຕາມ ຍຸດທະສາດວ່າດ້ວຍການອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ແລະ ການຂຶ້ນທະບຽນຂອງ ສປປ ລາວ ແຕ່ປີ 2016-2025 ເລກທີ 2098/ສທ, ລົງວັນທີ 03 ທັນວາ 2015;
- ອີງຕາມ ໜັງສືສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 4889/ກພງ, ລົງວັນທີ 18 ກໍລະກົດ 2022.

## ລັດຖະມົນຕີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງທາງດ້ານນິຕິກຳໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ສະພາຄຸ້ມຄອງວິຊາຊີບປິ່ນປົວ, ຊີ້ນຳມະຫາພາກ ໃນການຄຸ້ມຄອງ, ສົ່ງເສີມຈັນຍາບັນ, ຈັນຍາທຳ, ຂອບເຂດ ແລະ ມາດຕະຖານ ດ້ານເຕັກນິກວິຊາການ ຂອງຜູ້ປະກອບວິຊາຊີບປິ່ນປົວ ໃນ ສປປ ລາວ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ສະພາຄຸ້ມຄອງວິຊາຊີບປິ່ນປົວ ຂຽນຫຍໍ້ວ່າ “ສວປ”. ພາສາສາກົນ: Healthcare Professional Council ຂຽນຫຍໍ້ວ່າ: “HPC” ແມ່ນອົງກອນອິດສະຫຼະ ຂອງກະຊວງສາທາລະນະສຸກ ເຊິ່ງເປັນເຈົ້າຕົນເອງໃນການຄຸ້ມຄອງວິຊາການ, ງົບປະມານ ແລະ ບຸກຄະລາກອນ. ມີພາລະບົດບາດ ເປັນ ເສນາທິການ ໃຫ້ແກ່ ກະຊວງສາທາລະນະສຸກ ໃນການຄຸ້ມຄອງການເຄື່ອນໄຫວ ແລະ ເປັນຜູ້ຈັດຕັ້ງປະຕິບັດ ການກວດກາຄຸນນະພາບການບໍລິການສາທາລະນະສຸກ ຂອງຜູ້ປະກອບວິຊາຊີບປິ່ນປົວ ແລະ ປົກປ້ອງສິດຜົນປະໂຫຍດຂອງຜູ້ມາຮັບ ແລະ ຜູ້ໃຫ້ບໍລິການດ້ານການແພດ.

**ມາດຕາ 3 ການອະທິບາຍຄຳສັບ**

1. **ສະພາຄຸ້ມຄອງວິຊາຊີບປິ່ນປົວ** ໝາຍເຖິງ ອົງການອິດສະຫຼະຂອງກະຊວງສາທາລະນະສຸກ ເຊິ່ງເປັນເຈົ້າຕົນເອງໃນການຄຸ້ມຄອງທາງດ້ານວິຊາການ, ງົບປະມານ ແລະ ບຸກຄະລາກອນ ທີ່ມີສິດ ໃນການຊີ້ນຳ, ຄຸ້ມຄອງການເຄື່ອນໄຫວ ແລະ ກວດກາຄຸນນະພາບ ຂອງຜູ້ປະກອບວິຊາຊີບປິ່ນປົວ ແລະ ປົກປ້ອງສິດຜົນປະໂຫຍດຂອງຜູ້ມາຮັບບໍລິການ ແລະ ຜູ້ປະກອບວິຊາຊີບປິ່ນປົວ;
2. **ຄະນະກຳມະການວິຊາຊີບປິ່ນປົວ** (Boards) ໝາຍເຖິງ ການຈັດຕັ້ງວິຊາການໜຶ່ງເຊິ່ງມີໜ້າທີ່ໃນການຄຸ້ມຄອງການເຄື່ອນໄຫວ, ກວດກາຄຸນນະພາບ ຂອງຜູ້ປະກອບວິຊາຊີບປິ່ນປົວ ສະເພາະສາຂາວິຊາໃດໜຶ່ງ ເຊັ່ນ: ທ່ານໝໍ, ທັນຕະແພດ, ພະຍາບານ, ຜະດຸງຄັນ, ເພສັຊກອນ ແລະ ວິຊາອື່ນໆ;
3. **ຄະນະບໍລິຫານງານ** ໝາຍເຖິງ ປະທານ, ຮອງປະທານ, ກອງເລຂາຊ່ວຍວຽກ, ຄະນະກຳມະການວິຊາຊີບປິ່ນປົວ ແລະ ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ;
4. **ໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ** ໝາຍເຖິງ ໃບຢັ້ງຢືນຂີດຄວາມສາມາດຂອງຜູ້ປະກອບວິຊາຊີບປິ່ນປົວ ອອກໃຫ້ໂດຍສະພາຄຸ້ມຄອງວິຊາຊີບປິ່ນປົວ;
5. **ການຂຶ້ນທະບຽນຜູ້ປະກອບວິຊາຊີບປິ່ນປົວ** ໝາຍເຖິງ ການບັນທຶກຂໍ້ມູນຄົບຖ້ວນຂອງຜູ້ປະກອບວິຊາຊີບປິ່ນປົວທີ່ໄດ້ຮັບໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວເຂົ້າໃນຖານຂໍ້ມູນຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ;
6. **ການສອບເສັງລະດັບຊາດ** ໝາຍເຖິງ ການສອບເສັງເອົາໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວເບື້ອງຕົ້ນ;
7. **ຜູ້ປະກອບວິຊາຊີບປິ່ນປົວ** ໝາຍເຖິງ ຜູ້ປະກອບວິຊາຊີບການແພດສະໄໝໃໝ່ ແລະ ການແພດພື້ນເມືອງ ຕາມລະບຽບການທີ່ໄດ້ກຳນົດໄວ້;
8. **ການພັດທະນາວິຊາຊີບຕໍ່ເນື່ອງ** ໝາຍເຖິງ ການພັດທະນາຍົກລະດັບຂີດຄວາມສາມາດໃນວິຊາຊີບຢ່າງເປັນລະບົບຕໍ່ເນື່ອງ ເປັນຕົ້ນ ການສຶກສາຕໍ່ຍອດໄລຍະຍາວ, ເຂົ້າຮ່ວມການຝຶກອົບຮົມໄລຍະສັ້ນ, ສຳມະນາ, ປະຊຸມວິຊາການ, ເປັນຜູ້ສິດສອນດ້ານທິດສະດີ ແລະ ພາກປະຕິບັດ, ຄົ້ນຄວ້າວິທະຍາສາດ, ປະກອບສ່ວນໃຫ້ສັງຄົມ, ຮຽນຮູ້ດ້ວຍຕົນເອງ ແລະ ອື່ນໆ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ມີຂອບເຂດການນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວວິຊາຊີບປິ່ນປົວ ຢູ່ໃນ ສປປ ລາວ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 5 ໜ້າທີ່**

ສະພາຄຸ້ມຄອງວິຊາຊີບປິ່ນປົວ ມີໜ້າທີ່ດັ່ງນີ້:

1. ປະຕິບັດກົດໝາຍ, ນິຕິກຳອື່ນຂອງຂັ້ນເທິງ ແລະ ນິຕິກຳຕ່າງໆຂອງກະຊວງ;
2. ຄົ້ນຄວ້າ, ຮ່າງ ນະໂຍບາຍ, ຍຸດທະສາດ, ນິຕິກຳຕ່າງໆ ກ່ຽວກັບວຽກງານຄຸ້ມຄອງຜູ້ປະກອບວິຊາຊີບປິ່ນປົວເພື່ອສະເໜີລັດຖະມົນຕີພິຈາລະນາຮັບຮອງຕາມຄວາມເໝາະສົມ ພ້ອມທັງຜັນຂະຫຍາຍນິຕິກຳທີ່ກ່ຽວຂ້ອງ ມາເປັນແຜນການ, ແຜນງານ ແລະ ໂຄງການລະອຽດໃນການພັດທະນາວຽກງານຄຸ້ມຄອງຜູ້ປະກອບວິຊາຊີບປິ່ນປົວ;
3. ຮັບຮອງນະໂຍບາຍ, ຍຸດທະສາດ, ນິຕິກຳທີ່ກ່ຽວຂ້ອງ, ແຜນດຳເນີນງານ ແລະ ແຜນງົບປະມານ ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ຕາມການສະເໜີຂອງແຕ່ລະຄະນະກຳມະການວິຊາຊີບປິ່ນປົວ;

4. ສົມທົບກັບການຈັດຕັ້ງ ແລະ ພະນັກງານ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນການສ້າງຫຼັກສູດຝຶກອົບຮົມ ແລະ ການໃຫ້ຄະແນນສະສົມກ່ຽວກັບການພັດທະນາວິຊາຊີບຕໍ່ເນື່ອງຂອງຜູ້ປະກອບວິຊາຊີບປິ່ນປົວ;
5. ພິຈາລະນາ ແລະ ຮັບຮູ້ ແລະ ສະເໜີປັບປຸງ ຫຼັກສູດ ແລະ ມາດຕະຖານຄຸນນະພາບການສຶກສາຂອງສະຖານການສຶກສາສາທາລະນະສຸກ ຕາມມາດຕະການທີ່ໄດ້ກຳນົດໄວ້;
6. ສັງລວມລາຍຊື່ຂອງ ສະຖານການສຶກສາສາທາລະນະສຸກທີ່ໄດ້ຮັບຮອງຄຸນນະພາບ ແລະ ມາດຕະຖານການສຶກສາທັງພາຍໃນ ແລະ ຕ່າງປະເທດ;
7. ພິຈາລະນາ, ຮັບຮອງ, ອະນຸມັດແຜນການ ແລະ ເນື້ອໃນການສອບເສັງລະດັບຊາດຕາມການຄົ້ນຄວ້າ ແລະ ສະເໜີ ຂອງຄະນະກຳມະການວິຊາຊີບປິ່ນປົວ;
8. ຊີ້ນຳ, ນຳພາ ຂະບວນການສອບເສັງລະດັບຊາດ ຂອງແຕ່ລະຄະນະກຳມະການວິຊາຊີບປິ່ນປົວ;
9. ຮັບຮູ້ ແລະ ຢັ້ງຢືນ ຜົນການສອງເສັງລະດັບຊາດ ຂອງຜູ້ທີ່ສຳເລັດຈາກຫຼັກສູດການແພດ, ທັນຕະແພດ, ພະຍາບານ, ຜະດຸງຄັນ, ເພສັຊກັມ ຕາມການສະເໜີຂອງຄະນະກຳມະການວິຊາຊີບປິ່ນປົວ;
10. ຮັບຮູ້ ດ້ານຄວາມຮູ້, ທັກສະ, ຄວາມສາມາດ, ຄວາມຊຳນານ, ເຕັກນິກວິຊາການ ຕາມມາດຕະຖານວິຊາຊີບຂອງຜູ້ປະກອບວິຊາຊີບປິ່ນປົວ ຕາມການສະເໜີຂອງຄະນະກຳມະການວິຊາຊີບປິ່ນປົວ;
11. ພິຈາລະນາ, ອະນຸມັດການຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວປະເພດຕ່າງໆ ຕາມການຄົ້ນຄວ້າ ສະເໜີ ຂອງແຕ່ລະຄະນະກຳມະການວິຊາຊີບປິ່ນປົວ;
12. ຊີ້ນຳ ວຽກງານການພົວພັນ, ປະສານງານ, ຮ່ວມມືກັບພາກພື້ນ ແລະ ສາກົນ ດ້ານການສຶກສາ, ຄົ້ນຄວ້າວິໄຈ ແລະ ການພັດທະນາການປະກອບວິຊາຊີບ ໃຫ້ແກ່ຄະນະກຳມະການວິຊາຊີບປິ່ນປົວ ແລະ ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ;
13. ຊີ້ນຳ ການປະຕິບັດວິຊາຊີບປິ່ນປົວໃຫ້ມີຄຸນນະພາບ ຕາມຈັນຍາບັນວິຊາຊີບ, ຂອບເຂດການຈັດຕັ້ງປະຕິບັດວິຊາຊີບ, ຂີດຄວາມສາມາດ ແລະ ມາດຕະຖານການປະພຶດຕໍ່ຄົນເຈັບ ຂອງຜູ້ປະກອບວິຊາຊີບປິ່ນປົວ ໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງແຕ່ລະໄລຍະ;
14. ຊຸກຍູ້, ຕິດຕາມ, ກວດກາ, ຕີລາຄາ ແລະ ປະເມີນຜົນການເຄື່ອນໄຫວ ຂອງ ຜູ້ປະກອບວິຊາຊີບປິ່ນປົວ ຢູ່ສະຖານທີ່ບໍລິການສຸຂະພາບທັງພາກລັດ ແລະ ເອກະຊົນ ລວມທັງ ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ;
15. ຄົ້ນຄ້ວາ ພິຈາລະນາ ແລະ ຕັດສິນດ້ານວິຊາຊີບກ່ຽວກັບ ການຕຳນິ-ສິ່ງຂ່າວ, ຄຳຮ້ອງຟ້ອງ, ຄຳຮ້ອງທຸກ ຈາກການຈັດຕັ້ງ ແລະ ບຸກຄົນ ກ່ຽວກັບການປະຕິບັດໜ້າທີ່ຂອງຜູ້ປະກອບວິຊາຊີບປິ່ນປົວ;
16. ຕິດຕາມ, ກວດກາຄວາມຖືກຕ້ອງ ຂອງໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ຂອງຜູ້ປະກອບວິຊາຊີບປິ່ນປົວ ພ້ອມທັງ ສະເໜີມາດຕະການຕໍ່ຜູ້ທີ່ລະເມີດລະບຽບຫຼັກການໃນຮູບແບບຕ່າງໆ;
17. ຊີ້ນຳ, ຕິດຕາມ, ຊຸກຍູ້ ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ ໃນການຄຸ້ມຄອງລະບົບຂໍ້ມູນຂອງຜູ້ປະກອບວິຊາຊີບປິ່ນປົວ;
18. ປະຕິບັດໜ້າທີ່ອື່ນໆ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 6 ຂອບເຂດສິດ**

ຂອບເຂດສິດ ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ມີດັ່ງນີ້:

1. ອອກຂໍ້ຕົກລົງ, ລະບຽບການ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການຕ່າງໆ ກ່ຽວກັບວຽກງານທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;
2. ແຕ່ງຕັ້ງຄະນະກຳມະການ ແລະ ອະນຸກຳມະການ ຕ່າງໆ ທີ່ກ່ຽວຂ້ອງກັບວຽກງານຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ;

3. ອະນຸມັດ ຂອບເຂດ, ສິດຄວາມສາມາດ ແລະ ມາດຕະຖານ ຂອງການປະກອບວິຊາຊີບ ຕາມກົດຈັນຍາບັນ ແລະ ຈັນຍາທຳ ແນໃສ່ຮັບປະກັນຄວາມປອດໄພຂອງຜູ້ຮັບການບໍລິການສຸຂະພາບ ແລະ ຜູ້ປະກອບວິຊາຊີບປິ່ນປົວ;
4. ຂຶ້ນທະບຽນ ແລະ ອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ໃຫ້ຜູ້ປະກອບວິຊາຊີບປິ່ນປົວ ຕາມລະບຽບທີ່ໄດ້ກຳນົດໄວ້;
5. ຕຳນິ, ສິ່ງຂ່າວ, ໂຈະ, ຖອນ ແລະ ລຶບລ້າງການຂຶ້ນທະບຽນ ຕໍ່ຜູ້ລະເມີດລະບຽບຫຼັກການ ໃນການປະກອບວິຊາຊີບປິ່ນປົວໃນຮູບແບບຕ່າງໆ;
6. ປະສານງານຮ່ວມມືກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ຕິດພັນກັບການພັດທະນາວຽກງານການປະກອບວິຊາຊີບປິ່ນປົວ;
7. ນຳໃຊ້ງົບປະມານຂອງລັດ, ການຊ່ວຍເຫຼືອຈາກສາກົນ ແລະ ແຫຼ່ງລາຍຮັບອື່ນໆ ທັງພາຍໃນ ແລະ ຕ່າງປະເທດ ລວມທັງລາຍຮັບທີ່ໄດ້ມາຈາກການອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ, ການຂຶ້ນທະບຽນ ແລະ ຕໍ່ອາຍຸໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ;
8. ສະເໜີ ແລະ ໃຫ້ການຍ້ອງຍໍ ຜູ້ທີ່ມີຜົນງານດີເດັ່ນ ໃນວຽກງານຄຸ້ມຄອງວິຊາຊີບປິ່ນປົວ, ຜູ້ປະກອບສ່ວນໃຫ້ສະພາຄຸ້ມຄອງວິຊາຊີບປິ່ນປົວ ແລະ ຜູ້ປະກອບວິຊາຊີບປິ່ນປົວ;
9. ປະຕິບັດສິດອື່ນໆ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ

### ມາດຕາ 7 ໂຄງປະກອບການຈັດຕັ້ງ

ສະພາຄຸ້ມຄອງວິຊາຊີບປິ່ນປົວມີ ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ ເປັນເສນາທິການໃຫ້ແກ່ສະພາຄຸ້ມຄອງວິຊາຊີບປິ່ນປົວ ໃນການປະສານງານ ແລະ ພົວພັນຮ່ວມມືກັບພາກສ່ວນກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານບໍລິຫານ ແລະ ສະໜັບສະໜູນດ້ານພາລາທິການ ໃນການຄຸ້ມຄອງຜູ້ປະກອບວິຊາຊີບປິ່ນປົວ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງຕົນ.

### ມາດຕາ 8 ໂຄງປະກອບບຸກຄະລາກອນ

ໂຄງປະກອບບຸກຄະລາກອນຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ປະກອບດ້ວຍ:

1) ປະທານ
2) ຮອງປະທານ
3) ຄະນະກຳມະການຮ່ວມ
4) ຄະນະທີ່ປຶກສາ
5) ຄະນະກຳມະການວິຊາຊີບປິ່ນປົວ (Boards)
6) ຄະນະກຳມະການວິຊາການ
7) ສະມາຊິກຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ

**1. ປະທານ**

ສະພາຄຸ້ມຄອງວິຊາຊີບປິ່ນປົວ ປະກອບດ້ວຍ ປະທານ 1 ທ່ານ ແມ່ນ ຜູ້ຊົງຄຸນວຸດທິ ທີ່ມີຄວາມຮູ້, ຄວາມສາມາດ, ມີປະສົບການ, ມີວິໄສທັດ ກ່ຽວກັບວຽກງານການປະກອບວິຊາຊີບປິ່ນປົວ. ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ມີສິດ ແລະ ໜ້າທີ່ດັ່ງນີ້:

- ຊີ້ນຳການວາງແຜນ, ສະຫຼຸບ, ສັງລວມທຸກວຽກງານຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ແລະ ລາຍງານໃຫ້ກະຊວງຮັບຊາບເປັນປົກກະຕິ;
- ຕັດສິນ, ແກ້ໄຂບັນຫາຕາມພາລະບົດບາດ, ສິດ ແລະ ໜ້າທີ່ບົນພື້ນຖານຫຼັກການລວມສູນປະຊາທິປະໄຕ;
- ເປັນປະທານກອງປະຊຸມ ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວຕາມວາລະ ແລະ ຊີ້ນຳການຈັດຕັ້ງປະຕິບັດກິດຈະກຳຕາມລະບຽບການ ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ;
- ມອບສິດເປັນລາຍລັກອັກສອນໃຫ້ຮອງປະທານທ່ານໃດໜຶ່ງ ກ່ຽວກັບໜ້າທີ່ໃດໜຶ່ງຂອງຕົນຮັບຜິດຊອບ ເພື່ອວ່າການແທນໃນເມື່ອປະທານບໍ່ຢູ່ ຫຼື ຕິດຂັດ;

## 2. ຮອງປະທານ

ສະພາຄຸ້ມຄອງວິຊາຊີບປິ່ນປົວ ປະກອບດ້ວຍຮອງປະທານ ຈຳນວນໜຶ່ງ ເຊິ່ງແມ່ນຊີງຄຸນວຸດທິ ທີ່ມີຄວາມຮູ້, ຄວາມສາມາດ, ມີປະສົບການ, ມີວິໄສທັດກ່ຽວກັບ ວຽກງານການປະກອບວິຊາຊີບປິ່ນປົວ. ຮອງປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ມີສິດ ແລະ ໜ້າທີ່ ດັ່ງນີ້:

- ຊ່ວຍປະທານສະພາຄຸ້ມຄອງວິຊາຊີບປິ່ນປົວຕາມການມອບໝາຍບາງໜ້າທີ່;
- ເປັນເຈົ້າການຊີ້ນຳ ແລະ ແກ້ໄຂວຽກງານຕ່າງໆ ຕາມຄວາມຮັບຜິດຊອບທີ່ຕົນຖືກມອບໝາຍ ແລະ ລາຍງານຜົນການຈັດຕັ້ງປະຕິບັດວຽກງານໃຫ້ແກ່ປະທານ ແລະ ຄະນະບໍລິຫານງານຮັບຊາບຢ່າງເປັນປົກກະຕິ;
- ວ່າການແທນເມື່ອປະທານສະພາຄຸ້ມຄອງວິຊາຊີບປິ່ນປົວບໍ່ຢູ່ ຫຼື ຕິດຂັດ;
- ປະຕິບັດສິດ ແລະ ໜ້າທີ່ອື່ນ ເພື່ອຊ່ວຍປະທານຕາມການມອບໝາຍ;

➢ ປະທານ ແລະ ຮອງປະທານ ໄດ້ຮັບການແຕ່ງຕັ້ງຈາກທ່ານລັດຖະມົນຕີກະຊວງສາທາລະນະສຸກ ມີອາຍຸການ 5 ປີ ໂດຍຜ່ານການເລືອກຕັ້ງ ຫຼື ແຕ່ງຕັ້ງ.

## 3. ຄະນະກຳມະການຮ່ວມ

ຄະນະກຳມະການຮ່ວມ ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ປະກອບດ້ວຍຜູ້ຕາງໜ້າຈາກກະຊວງສາທາລະນະສຸກ ແລະ ກະຊວງທີ່ກ່ຽວຂ້ອງ ດັ່ງນີ້:

1) ຫົວໜ້າຫ້ອງການກະຊວງສາທາລະນະສຸກ
2) ຫົວໜ້າກົມຈັດຕັ້ງ ແລະ ພະນັກງານ
3) ຫົວໜ້າກົມກວດກາ
4) ຫົວໜ້າກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ
5) ຫົວໜ້າກົມອາຫານ ແລະ ຢາ
6) ຫົວໜ້າກົມແຜນການ ແລະ ການເງິນ
7) ອະທິການບໍດີ ມະຫາວິທະຍາໄລ ວິທະຍາສາດ ສຸຂະພາບ
8) ຫົວໜ້າສູນສະຖິຕິ ແລະ ຂ່າວສານສາທາລະນະສຸກ
9) ຫົວໜ້າກົມເສນາຮັກ ກະຊວງປ້ອງກັນປະເທດ
10) ຫົວໜ້າກົມເສນາຮັກ ກະຊວງປ້ອງກັນຄວາມສະຫງົບ
11) ຫົວໜ້າກົມຄຸ້ມຄອງລັດຖະກອນ ກະຊວງພາຍໃນ
12) ຫົວໜ້າກົມສື່ມວນຊົນ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
13) ຫົວໜ້າກົມກົດໝາຍ ກະຊວງຍຸຕິທຳ
14) ຫົວໜ້າກົມຄຸ້ມຄອງແຮງງານ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
15) ຫົວໜ້າກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ

16) ຫົວໜ້າກົມນິຕິກຳ ແລະ ປະກັນຄຸນນະພາບການສຶກສາ ກະຊວງສຶກສາທິການ ແລະ ກິລາ

17) ປະທານຄະນະກຳມະການແຫ່ງຊາດດ້ານຈັນຍາທຳການຄົ້ນຄ້ວາສາທາລະນະສຸກ

ຄະນະກຳມະການຮ່ວມ ມີໜ້າທີ່ ດັ່ງນີ້:

- ເຂົ້າຮ່ວມກອງປະຊຸມ, ຄົ້ນຄວ້າ, ພິຈາລະນາ, ປະກອບຄຳຄິດເຫັນ, ຮັບຮອງ ນະໂຍບາຍ ແລະ ລະບຽບການຕ່າງໆ ກ່ຽວກັບຜູ້ປະກອບວິຊາຊີບປິ່ນປົວ ຕາມການເຊີນຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ;
- ເຂົ້າຮ່ວມປຶກສາຫາລືກ່ຽວກັບການສືບສວນ, ສອບສວນ, ກວດກາ, ພິຈາລະນາຄຳຮ້ອງຟ້ອງ, ຮ້ອງທຸກກ່ຽວກັບ ການປະຕິບັດໜ້າທີ່ຂອງຜູ້ປະກອບວິຊາຊີບປິ່ນປົວ ຕາມການສະເໜີຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ.

## 4. ຄະນະທີ່ປຶກສາ

ຄະນະທີ່ປຶກສາປະກອບດ້ວຍ ບັນດາອະດີດການນຳກະຊວງສາທາລະນະສຸກ, ຄະນະນຳຂອງສະຖາບັນການສຶກສາ ແລະ ໂຮງໝໍ, ຄະນະກົມມະຫາພາກ ແລະ ຜູ້ຊ່ຽວຊານອາວຸໂສ. ຄະນະທີ່ປຶກສາ ມີໜ້າທີ່ໃຫ້ຄຳປຶກສາແກ່ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ກ່ຽວກັບການເຄື່ອນໄຫວ ແລະ ຄຸ້ມຄອງຄຸນນະພາບຂອງການບໍລິການ ຂອງຜູ້ປະກອບວິຊາຊີບປິ່ນປົວ.

## 5. ຄະນະກຳມະການວິຊາຊີບປິ່ນປົວ (Boards):

ສະພາຄຸ້ມຄອງວິຊາຊີບປິ່ນປົວ ປະກອບດ້ວຍຄະນະກຳມະການວິຊາຊີບປິ່ນປົວຕ່າງໆ ເຊັ່ນ:

1. ຄະນະກຳມະການວິຊາຊີບທ່ານໝໍ
2. ຄະນະກຳມະການວິຊາຊີບທັນຕະແພດ
3. ຄະນະກຳມະການວິຊາຊີບພະຍາບານ ແລະ ຜະດຸງຄັນ
4. ຄະນະກຳມະການວິຊາຊີບເພສັຊກອນ

ຄະນະກຳມະການວິຊາຊີບປິ່ນປົວ ປະກອບດ້ວຍຫົວໜ້າ 1 ທ່ານ, ຮອງຫົວໜ້າ, ກຳມະການ ແລະ ກອງເລຂາຈຳນວນໜຶ່ງ ຕາມຄວາມເໝາະສົມຂອງແຕ່ລະສາຂາວິຊາຊີບ, ຊຶ່ງແມ່ນຜູ້ຊ່ຽວຊານທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການໃນວຽກງານການປະກອບວິຊາຊີບປິ່ນປົວ. ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການວິຊາຊີບປິ່ນປົວ ມອບໃຫ້ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ເປັນຜູ້ແຕ່ງຕັ້ງ.

## 6. ຄະນະກຳມະການວິຊາການ

ຄະນະກຳມະການວິຊາການ ປະກອບດ້ວຍ ຄະນະບໍດີຂອງແຕ່ລະຄະນະວິຊາ, ຫົວໜ້າພາກວິຊາ, ຜູ້ອຳນວຍການໂຮງໝໍສິດສອນ ລວມທັງໂຮງໝໍສູນກາງ 103 ກອງທັບ, ໂຮງໝໍ 5 ເມສາ ແລະ ວິທະຍາຄານການແພດກອງທັບ. ຄະນະກຳມະການວິຊາການ ມີໜ້າທີ່ ປະກອບສ່ວນຊ່ວຍຄະນະກຳມະການວິຊາຊີບປິ່ນປົວ ທີ່ກ່ຽວຂ້ອງຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ກ່ຽວກັບວຽກງານຄຸນນະພາບດ້ານການບໍລິການ ແລະ ວຽກອື່ນໆ ຂອງຜູ້ປະກອບວິຊາຊີບປິ່ນປົວ.

## 7. ສະມາຊິກຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ

ສະມາຊິກຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ແມ່ນຜູ້ທີ່ໄດ້ຮັບໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ ແລະ ໄດ້ຂຶ້ນທະບຽນເປັນຜູ້ປະກອບວິຊາຊີບປິ່ນປົວ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 9 ຫຼັກການ**

ສະພາຄຸ້ມຄອງວິຊາຊີບປິ່ນປົວ ເຄື່ອນໄຫວອົງການຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງແກ້ໄຂບັນຫາເປັນໝູ່ຄະນະ ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບຢ່າງຈະແຈ້ງ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານລັດຖະກອນທຸກລະດັບ, ທຸກການເຄື່ອນໄຫວແມ່ນອີງໃສ່ລະບຽບກົດໝາຍ ແລະ ຫຼັກການລວມຂອງກະຊວງສາທາລະນະສຸກ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 10 ແບບແຜນວິທີເຮັດວຽກ**

ສະພາຄຸ້ມຄອງວິຊາຊີບປິ່ນປົວເຮັດວຽກແບບມີແຜນການ, ແຜນງານ, ໂຄງການ, ມີການຕິດຕາມ, ກວດກາ, ປະເມີນຜົນ, ຖອດຖອນບົດຮຽນຢ່າງມີຈຸດສຸມໃນແຕ່ລະໄລຍະ, ປະຕິບັດລະບອບປະຊຸມຢ່າງເຂັ້ມງວດ.

ກອງປະຊຸມສາມັນຄົບຄະນະ ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວຈັດຂຶ້ນປີລະ 2 ຄັ້ງ, ໃນກໍລະນີຈຳເປັນສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ ເພື່ອພິຈາລະນາບັນຫາທີ່ຈຳເປັນ, ຖືເອົາສຽງ 2/3 (ສອງສ່ວນສາມ) ຂອງສະມາຊິກທີ່ເຂົ້າຮ່ວມກອງປະຊຸມເປັນອັນຕັດສິນ. ສ່ວນກອງປະຊຸມໃຫຍ່ ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວຈັດຂຶ້ນ ທຸກໆ 2 ປີ.

**ມາດຕາ 11 ນະໂຍບາຍຕໍ່ບຸກຄະລາກອນ**

ພະນັກງານບຳນານ, ຄະນະບໍລິຫານງານ ແລະ ຄະນະກຳມະການຕ່າງໆ ທີ່ມາປະຈຳການເປັນປົກກະຕິ ໄດ້ຮັບນະໂຍບາຍຕ່າງໆຕາມລະບຽບການທີ່ໄດ້ກຳນົດໄວ້ ໂດຍມອບໃຫ້ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວອອກກົດລະບຽບພາຍໃນສະເພາະ ທາງດ້ານລາຍຮັບ ລາຍຈ່າຍ ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ຕາມເງື່ອນໄຂຕົວຈິງໃນແຕ່ລະໄລຍະ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 12 ງົບປະມານ, ຕາປະທັບ ແລະ ກາໝາຍ**

ສະພາຄຸ້ມຄອງວິຊາຊີບປິ່ນປົວມີ ງົບປະມານ, ຕາປະທັບ ແລະ ກາໝາຍ ເປັນຂອງຕົນເອງເພື່ອຮັບໃຊ້ວຽກງານທາງລັດຖະການ ໂດຍແມ່ນຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວເປັນຜູ້ຄຸ້ມຄອງ.

ແຫຼ່ງງົບປະມານຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ໄດ້ມາຈາກ:

1. ງົບປະມານປະຈຳປີຂອງກະຊວງສາທາລະນະສຸກ;
2. ການຊ່ວຍເຫຼືອຈາກພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ;
3. ລາຍຮັບຈາກການອອກໃບອະນຸຍາດເຄື່ອນໄຫວວິຊາຊີບປິ່ນປົວ, ການຂຶ້ນທະບຽນ ແລະ ຕໍ່ອາຍຸ;
4. ແຫຼ່ງລາຍຮັບອື່ນໆ.

**ມາດຕາ 13 ການຜັນຂະຫຍາຍ**

ປະທານສະພາຄຸ້ມຄອງວິຊາຊີບປິ່ນປົວ ເປັນຜູ້ກຳນົດລະບອບ ລະບຽບ ການເຄື່ອນໄຫວລະອຽດ ຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ, ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ, ພ້ອມທັງແຕ່ງຕັ້ງຄະນະກຳມະການຝ່າຍຕ່າງໆ ຕາມຄວາມເໝາະສົມ.

**ມາດຕາ 14 ການຈັດຕັ້ງປະຕິບັດ**

ໃຫ້ສະພາຄຸ້ມຄອງວິຊາຊີບປິ່ນປົວ, ຫ້ອງການສະພາຄຸ້ມຄອງວິຊາຊີບປິ່ນປົວ, ຄະນະກຳມະການຮ່ວມ, ຄະນະທີ່ປຶກສາ, ຄະນະກຳມະການວິຊາຊີບປິ່ນປົວ, ຄະນະກຳມະການວິຊາການ, ສະມາຊິກຂອງສະພາຄຸ້ມຄອງວິຊາຊີບປິ່ນປົວ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ.

**ມາດຕາ 15 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງສະບັບ ເລກທີ 0131/ສທ, ລົງວັນທີ 19 ມັງກອນ 2017.

**ລັດຖະມົນຕີ**

ປອ.ດຣ. ບຸນແຝງ ພູມມະໄລສິດ